ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 299 /ລບ
ນະຄອນຫຼວງວຽງຈັນ, ວັນທີ 05-06-2024

# ດຳລັດ
# ວ່າດ້ວຍການຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍສັດປ່າ ສະບັບເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 5031/ກປ, ລົງວັນທີ 19 ທັນວາ 2023.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ເພື່ອເຮັດໃຫ້ ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ບໍ່ໃຫ້ມີການລັກລອບຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ແບບຜິດກົດໝາຍ ແລະ ການນຳໃຊ້ແບບດັບສູນ, ຮັບປະກັນການນຳໃຊ້ ຊັບພະຍາກອນທຳມະຊາດແບບຍືນຍົງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ**

ການຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ແມ່ນ ການຈັດຕັ້ງປະຕິບັດ ບັນດາ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຕາມບັນຊີ I, II ແລະ III ຂອງໄຊເຕັດ ໃຫ້ຖືກຕ້ອງຕາມກົດໝາຍ, ມີປະສິດທິຜົນ ແລະ ຮັບປະກັນຄວາມຍືນຍົງ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໄຊເຕັດ (CITES: Convention on International Trade in Endangered Species of Wild Fauna and Flora)** ໝາຍເຖິງ ສົນທິສັນຍາ ວ່າດ້ວຍການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຊຶ່ງຖືກຮັບຮອງ ຢູ່ ນະຄອນວໍຊິງຕັນດີຊີ ໃນວັນທີ 03 ມີນາ 1973 ແລະ ສປປ ລາວ ເຂົ້າເປັນພາຄີ ໃນວັນທີ 01 ມີນາ 2004;
2. **ກອງເລຂາໄຊເຕັດ (CITES Secretariat)** ໝາຍເຖິງ ກອງເລຂາ ທີ່ເຮັດໜ້າທີ່ເປັນໃຈກາງລວບລວມ ແລະ ສັງລວມບັນດາຂໍ້ມູນ ຂ່າວສານ ແລະ ບົດລາຍງານ, ອຳນວຍຄວາມສະດວກ ໃນການຈັດກອງປະຊຸມ ແລະ ໃນທຸກການເຄື່ອນໄຫວຂອງບັນດາປະເທດພາຄີ, ພ້ອມທັງແຈ້ງທຸກການເຄື່ອນໄຫວທີ່ກ່ຽວຂ້ອງ ຂອງບັນດາປະເທດພາຄີ ໂດຍຜ່ານເວັບໄຊ (https://cites.org/eng/disc/sec/index.php), ມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນເຊີແນວ, ປະເທດສະວິດເຊີແລນ;
3. **ປະເທດພາຄີ** ໝາຍເຖິງ ປະເທດທີ່ໄດ້ ເຂົ້າຮ່ວມລົງນາມ ແລະ ໃຫ້ສັດຕະຍາບັນຕໍ່ໄຊເຕັດ;
4. **ກອງປະຊຸມບັນດາປະເທດພາຄີ (COP: Conference of the Parties)** ໝາຍເຖິງ ກອງປະຊຸມທີ່ຈັດຂຶ້ນຢ່າງໜ້ອຍທຸກ ສອງປີ ເພື່ອຕັດສິນບັນຫາສຳຄັນຕ່າງໆ ກ່ຽວກັບໄຊເຕັດ ຕາມທີ່ກຳນົດໄວ້ໃນໄຊເຕັດ;
5. **ໜ່ວຍງານຄຸ້ມຄອງໄຊເຕັດ (CITES MA: CITES Management Authority)** ໝາຍເຖິງ ໜ່ວຍງານໜຶ່ງທີ່ຂຶ້ນກັບ ກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງໄດ້ຮັບການສ້າງຕັ້ງໂດຍ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເຮັດໜ້າທີ່ໃນການຈັດຕັ້ງປະຕິບັດວຽກງານໄຊເຕັດ;
6. **ໜ່ວຍງານວິທະຍາສາດໄຊເຕັດ (CITES SA: CITES Scientific Authority)** ໝາຍເຖິງ ໜ່ວຍງານໜຶ່ງ ທີ່ຂຶ້ນກັບ ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ, ກະຊວງສຶກສາທິການ ແລະ ກິລາ ຊຶ່ງໄດ້ຮັບການສ້າງຕັ້ງໂດຍ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເຮັດໜ້າທີ່ຄົ້ນຄວ້າ ແລະ ຢັ້ງຢືນທາງດ້ານວິທະຍາສາດ;
7. **ຈຸດປະສົງທາງການຄ້າ** ໝາຍເຖິງ ການດຳເນີນກິດຈະກຳທີ່ກ່ຽວຂ້ອງກັບ ການຄ້າຂາຍສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ດ້ວຍເງິນ ແລະ ຮູບແບບອື່ນ ເພື່ອຜົນປະໂຫຍດທາງເສດຖະກິດ;
8. **ຈຸດປະສົງທີ່ບໍ່ແມ່ນທາງການຄ້າ** ໝາຍເຖິງ ການດຳເນີນກິດຈະກຳທີ່ກ່ຽວຂ້ອງກັບ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ເພື່ອການສຶກສາຄົ້ນຄວ້າດ້ານວິທະຍາສາດ, ການຝຶກອົບຮົມ ຫຼື ການສຶກສາ, ການສືບສວນ-ສອບສວນ, ການຈັດສົ່ງຄືນ ສັດນ້ຳ, ສັດປ່າ ແລະ ພືດປ່າ ລະຫວ່າງ ໜ່ວຍງານຄຸ້ມຄອງໄຊເຕັດ ຂອງ ສປປ ລາວ ກັບ ໜ່ວຍງານຄຸ້ມຄອງໄຊເຕັດ ຂອງຕ່າງປະເທດ;
9. **ສັດນ້ຳ** ໝາຍເຖິງ ສັດທຸກຊະນິດທີ່ເກີດ ແລະ ຂະຫຍາຍຕົວຢູ່ໃນນ້ຳ ຫຼື ວົງຈອນຊີວິດໄລຍະໃດໜຶ່ງ ຢູ່ໃນນ້ຳ ຕາມທຳມະຊາດ ຫຼື ນຳເອົາຈາກທຳມະຊາດມາລ້ຽງ ແລະ ຂະຫຍາຍພັນ ລວມທັງ ໄຂ່, ນ້ຳເຊື້ອ, ໂຕອ່ອນ ຂອງສັດນ້ຳ;
10. **ສັດປ່າ** ໝາຍເຖິງ ສັດທຸກຊະນິດ ທີ່ເກີດ, ດຳລົງຊີວິດ ແລະ ຂະຫຍາຍຕົວ ຢູ່ໃນປ່າ, ຖິ່ນທີ່ຢູ່ອາໄສຂອງສັດປ່າ ຫຼື ຖືກນຳເອົາມາລ້ຽງ ແລະ ຂະຫຍາຍພັນ ຊຶ່ງປະກອບດ້ວຍ ສັດລ້ຽງລູກດ້ວຍນ້ຳນົມ, ສັດເລືອຄານ, ສັດປີກ ແລະ ສັດປ່າ ຊະນິດອື່ນ;
11. **ພືດປ່າ** ໝາຍເຖິງ ຕົ້ນໄມ້ ແລະ ພືດ ທຸກຊະນິດ ທີ່ເກີດຂຶ້ນໃນປ່າ ແລະ ໃນນ້ຳ ລວມທັງພືດ ແລະ ຕົ້ນໄມ້ທີ່ໄດ້ນຳມາຈາກປ່າ ແລະ ນ້ຳ ເພື່ອປູກ ຫຼື ຂະຫຍາຍພັນທຽມ;
12. **ຊາກ** ໝາຍເຖິງ ສັດໝົດໂຕ ແລະ ພືດ ທີ່ຕາຍແລ້ວ;

13. **ຊິ້ນສ່ວນ** ໝາຍເຖິງ ພາກສ່ວນໃດໜຶ່ງ ຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ເຊັ່ນ ຫົວ, ເລັບ, ເຂົາ, ງາ, ກະດູກ, ບີ, ນ້ຳມັນ, ອອງ, ຂົນ, ເກັດ, ແຂ້ວ, ເລືອດ, ໜັງ, ໃບ, ໝາກ, ແກ່ນ, ເຄືອ, ຮາກ, ຫົວ ແລະ ພາກສ່ວນອື່ນ;
14. **ຜະລິດຕະພັນ** ໝາຍເຖິງ ການນຳເອົາຊາກ, ຊິ້ນສ່ວນ ຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ນຳມາປຸງແຕ່ງ ເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ເຊັ່ນ ອາຫານ, ຢາປົວພະຍາດ, ເຄື່ອງປະດັບ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງດົນຕີ, ເຄື່ອງໃຊ້ເຂົ້າໃນການສຶກສາ ແລະ ອື່ນໆ;
15. **ການຂະຫຍາຍພັນທຽມພືດປ່າ** ໝາຍເຖິງ ພືດທຸກຊະນິດທີ່ເຕີບໃຫຍ່ ຢູ່ພາຍໃຕ້ສະພາບແວດລ້ອມທີ່ຖືກຄວບຄຸມ ຊຶ່ງເກີດມາຈາກ ເມັດພັນພືດ, ການຕໍ່ກິ່ງ ຫຼື ງ່າ, ການສຽບຍອດ, ເນື້ອເຍື່ອຈຸລັງ ຫຼື ຈຸລັງພືດອື່ນ, ສະປໍ ຫຼື ການຂະຫຍາຍພັນທຽມຮູບແບບອື່ນ ຫຼື ເກີດຈາກພໍ່ແມ່ພັນທີ່ຖືກນຳມາເພາະປູກ;
16. **ການຂະຫຍາຍພັນສັດນ້ຳ ແລະ ສັດປ່າ** ໝາຍເຖິງ ການນຳເອົາພໍ່ແມ່ພັນ ມາປະສົມພັນແບບທຳມະຊາດ, ເຄິ່ງທຳມະຊາດ ຫຼື ປະສົມພັນທຽມ ພາຍໃຕ້ສະພາບແວດລ້ອມທີ່ຖືກຄວບຄຸມ ເພື່ອໃຫ້ໄດ້ໄຂ່ ຫຼື ລູກ;
17. **ສະພາບແວດລ້ອມທີ່ຖືກຄວບຄຸມ** ໝາຍເຖິງ ສະພາບແວດລ້ອມທີ່ບໍ່ແມ່ນຖິ່ນທີ່ຢູ່ອາໄສທຳມະຊາດ ຊຶ່ງຖືກສ້າງຂຶ້ນມາໂດຍມະນຸດ ເພື່ອຂະຫຍາຍພັນ ສັດນ້ຳ, ສັດປ່າ ແລະ ພືດປ່າ ໂດຍມີການກຳນົດຂອບເຂດພື້ນທີ່ ທີ່ຖືກອອກແບບມາເພື່ອລ້ຽງໃຫ້ເຕີບໃຫຍ່ ແລະ ປອດໄພ;
18. **ການກວດກາຄວາມຖືກຕ້ອງທາງດ້ານກົດໝາຍ (LAF: Legal Acquisition Finding)** ໝາຍເຖິງ ການດຳເນີນການກວດກາການໄດ້ມາຂອງສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ຢ່າງຖືກຕ້ອງຕາມກົດໝາຍ ໂດຍໜ່ວຍງານຄຸ້ມຄອງໄຊເຕັດ;
19. **ການສຶກສາຄວາມຢູ່ລອດ (NDF: Non-Detriment Finding)** ໝາຍເຖິງ ການຄົ້ນຄວ້າທາງດ້ານວິທະຍາສາດ ເພື່ອຮັບປະກັນວ່າ ການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ຈະບໍ່ສົ່ງຜົນກະທົບທາງລົບຕໍ່ຄວາມຢູ່ລອດຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ໂດຍໜ່ວຍງານວິທະຍາສາດໄຊເຕັດ.

### ມາດຕາ 4 ຫຼັກການກ່ຽວກັບ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ

ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
2. ປົກປ້ອງຜົນປະໂຫຍດ ຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້;
3. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ສັດນ້ຳ, ສັດປ່າ ແລະ ພືດປ່າ ຢ່າງມີປະສິດທິຜົນ ແລະ ຮັບປະກັນຄວາມຍືນຍົງ.

### ມາດຕາ 5 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຢູ່ ສປປ ລາວ.

## ໝວດທີ 2
## ບັນຊີ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ

**ມາດຕາ 6 ບັນຊີ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ**

ບັນຊີ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ມີ ສາມ ບັນຊີ ດັ່ງນີ້:

1. ບັນຊີ I ແມ່ນ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ຖືກໄພຂົ່ມຂູ່ ແລະ ມີຄວາມສ່ຽງຕໍ່ການສູນພັນ, ໄດ້ຮັບຜົນກະທົບຈາກ ການລ່າ, ຂຸດຄົ້ນ, ຄ້າຂາຍ ແລະ ການນຳໃຊ້ແບບດັບສູນ;

2. ບັນຊີ II ແມ່ນ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ຍັງບໍ່ຖືກໄພຂົ່ມຂູ່ຕໍ່ການສູນພັນໃນປັດຈຸບັນ ແຕ່ໃນຕໍ່ໜ້າ ອາດຈະສູນພັນ ຖ້າບໍ່ມີການຄຸ້ມຄອງທີ່ດີ;

3. ບັນຊີ III ແມ່ນ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ສາມາດຂະຫຍາຍພັນໄດ້ຕາມທຳມະຊາດຢ່າງກວ້າງຂວາງ ແຕ່ອາດມີຄວາມສ່ຽງໄດ້ຮັບຜົນກະທົບທາງລົບໃນຕໍ່ໜ້າ ຊຶ່ງປະເທດພາຄີໃດໜຶ່ງ ໄດ້ສະເໜີໃຫ້ມີການປົກປ້ອງ ໂດຍຂໍຮ້ອງໃຫ້ປະເທດພາຄີອື່ນ ຮ່ວມມືໃນການຄວບຄຸມການຄ້າຂາຍ.

ບັນຊີດັ່ງກ່າວ ຈະຖືກເຜີຍແຜ່ຢ່າງເປັນທາງການ ໃນເວັບໄຊຂອງໄຊເຕັດ (https://cites.org/eng/disc/sec/index.php).

**ມາດຕາ 7 ການປັບປຸງ ບັນຊີ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ**

ໃນກໍລະນີຈຳເປັນ ຕ້ອງປັບປຸງບັນຊີ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໜ່ວຍງານຄຸ້ມຄອງໄຊເຕັດ ປະສານສົມທົບກັບ ໜ່ວຍງານວິທະຍາສາດໄຊເຕັດ ດຳເນີນການສຶກສາ ເພື່ອກະກຽມເອກະສານ ຂໍ້ມູນ, ເຫດຜົນທີ່ຈຳເປັນ, ສະຖານະພາບ, ໄພຂົ່ມຂູ່ຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ກ່ຽວກັບການເພີ່ມເຂົ້າ ເລື່ອນຂຶ້ນ, ຫຼຸດລົງ ຫຼື ຕັດອອກ ຈາກບັນຊີໄຊເຕັດ ເພື່ອສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ຮັບຮອງ ແລ້ວນຳສະເໜີຕໍ່ ກອງປະຊຸມບັນດາປະເທດພາຄີ ພິຈາລະນາຕາມຂັ້ນຕອນຂອງໄຊເຕັດ.

ກອງເລຂາໄຊເຕັດ ຈະເປີດກອງປະຊຸມບັນດາປະເທດພາຄີ ເພື່ອທົບທວນຄືນການຈັດຕັ້ງປະຕິບັດສົນທິສັນຍາໄຊເຕັດ ພ້ອມທັງ ພິຈາລະນາ, ດັດແກ້ ແລະ ຮັບຮອງ ບັນຊີ I ແລະ ບັນຊີ II ຕາມການເຫັນດີ ຂອງສຽງສ່ວນຫຼາຍຈາກບັນດາປະເທດພາຄີທີ່ເຂົ້າຮ່ວມກອງປະຊຸມ. ສຳລັບບັນຊີ III ແມ່ນຮັບຮອງເອົາຕາມການສະເໜີຂອງປະເທດພາຄີໃດໜຶ່ງ. ເມື່ອບັນຊີ I ແລະ ບັນຊີ II ຖືກປັບປຸງໂດຍກອງປະຊຸມຂອງບັນດາປະເທດພາຄີ, ບັນດາປະເທດພາຄີ ກໍ່ຕ້ອງໄດ້ນຳໄປປັບປຸງ ບັນຊີ ສັດນ້ຳ, ສັດປ່າ ແລະ ພືດປ່າ ຂອງຕົນ ແລະ ເຜີຍແຜ່ ພາຍໃນເວລາ ເກົ້າສິບ ວັນ ຫຼັງການຮັບຮອງໂດຍ ກອງປະຊຸມຂອງບັນດາປະເທດພາຄີ.

## ໝວດທີ 3
## ການຂຶ້ນທະບຽນ ແລະ ແຈ້ງບັນຊີ

**ມາດຕາ 8 ການຂຶ້ນທະບຽນ ແລະ ແຈ້ງບັນຊີ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີການຄອບຄອງ, ການຂະຫຍາຍພັນສັດນ້ຳ ແລະ ສັດປ່າ, ການຂະຫຍາຍພັນທຽມພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນທີ່ນອນໃນບັນຊີໄຊເຕັດ ຫາກມີຈຸດປະສົງ ເພື່ອການຄ້າຂາຍລະຫວ່າງຊາດ ຕ້ອງຂຶ້ນທະບຽນ ແລະ ແຈ້ງບັນຊີການຄອບຄອງ ນຳໜ່ວຍງານຄຸ້ມຄອງໄຊເຕັດ ແລະ ຕ້ອງເກັບຮັກສາຂໍ້ມູນ ກ່ຽວກັບຈຳນວນ ສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ແລະ ຂໍ້ມູນທຸກທຸລະກຳການຄ້າຂາຍ. ໜ່ວຍງານຄຸ້ມຄອງໄຊເຕັດ ມີສິດດຳເນີນການກວດກາ ສະຖານທີ່, ການໄດ້ມາຢ່າງຖືກຕ້ອງຕາມກົດໝາຍຂອງ ສັດນ້ຳ,

ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ແລະ ຂໍ້ມູນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຂຶ້ນທະບຽນ.

ເອກະສານຂໍຂຶ້ນທະບຽນ ແລະ ແຈ້ງບັນຊີ ປະກອບດ້ວຍ:

1. ຄໍາຮ້ອງຂໍຂຶ້ນທະບຽນ ຕາມແບບພິມທີ່ ໜ່ວຍງານຄຸ້ມຄອງໄຊເຕັດ ຂອງ ສປປ ລາວ ກໍານົດ;
2. ບັນຊີ ສັດນໍ້າ, ສັດປ່າ ແລະ ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ທີ່ຢູ່ໃນການຄອບຄອງ ຂອງຕົນ.

**ມາດຕາ 9 ການພິຈາລະນາຂຶ້ນທະບຽນ ແລະ ແຈ້ງບັນຊີ**

ພາຍຫຼັງ ໄດ້ຮັບຄໍາຮ້ອງຂໍຂຶ້ນທະບຽນ ແລະ ແຈ້ງບັນຊີການຄອບຄອງແລ້ວ ໜ່ວຍງານຄຸ້ມຄອງໄຊເຕັດ ຄົ້ນຄວ້າພິຈາລະນາ ຂຶ້ນທະບຽນ ແລະ ແຈ້ງບັນຊີການຄອບຄອງ ພ້ອມທັງອອກໃບທະບຽນຂຶ້ນບັນຊີ ໃຫ້ຜູ້ຮ້ອງຂໍ ພາຍໃນເວລາ ສາມສິບວັນ. ໃນກໍລະນີບໍ່ສາມາດຂຶ້ນທະບຽນ ແລະ ແຈ້ງບັນຊີການຄອບຄອງ ຕ້ອງແຈ້ງຕອບເປັນ ລາຍລັກອັກສອນ ພ້ອມທັງເຫດຜົນ ໃຫ້ຜູ້ຮ້ອງຂໍຊາບ.

## ໝວດທີ 4
## ການຄ້າຂາຍ, ນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ສົ່ງຜ່ານ

**ມາດຕາ 10 ການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ**

ການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ຕາມບັນຊີຂອງໄຊເຕັດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ໃຫ້ປະຕິບັດ ດັ່ງນີ້:

1. ບັນຊີ I ຂອງ ສັດນໍ້າ ແລະ ສັດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ບໍ່ອະນຸຍາດໃຫ້ຄ້າຂາຍຢ່າງເດັດຂາດ ເວັ້ນເສຍແຕ່ໃນກໍລະນີ ຈຸດປະສົງທີ່ບໍ່ແມ່ນທາງການຄ້າ ແຕ່ຕ້ອງດໍາເນີນການສຶກສາຄວາມຢູ່ລອດ, ການກວດກາຄວາມຖືກຕ້ອງທາງດ້ານກົດໝາຍ ແລະ ຕ້ອງໄດ້ ຮັບໃບອະນຸຍາດ ຈາກໜ່ວຍງານຄຸ້ມຄອງໄຊເຕັດ;
2. ບັນຊີ I ຂອງ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ທີ່ ໄດ້ມາຈາກທໍາມະຊາດ ບໍ່ອະນຸຍາດໃຫ້ຄ້າຂາຍຢ່າງເດັດຂາດ ເວັ້ນເສຍແຕ່ໃນກໍລະນີ ຈຸດປະສົງທີ່ບໍ່ ແມ່ນທາງການຄ້າ, ແຕ່ຕ້ອງດໍາເນີນການສຶກສາຄວາມຢູ່ລອດ, ການກວດກາຄວາມຖືກຕ້ອງທາງດ້ານ ກົດໝາຍ ແລະ ຕ້ອງໄດ້ຮັບໃບອະນຸຍາດ ຈາກໜ່ວຍງານຄຸ້ມຄອງໄຊເຕັດ. ສໍາລັບ ບັນຊີ I ຂອງພືດປ່າ ທີ່ໄດ້ມາຈາກການຂະຫຍາຍພັນທຽມ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ອະນຸຍາດໃຫ້ດໍາ ເນີນກິດຈະການ ເພື່ອຈຸດປະສົງທາງການຄ້າ ແລະ ທີ່ບໍ່ແມ່ນທາງການຄ້າ ຄືກັບການຄ້າຂາຍ ບັນຊີ II ຂອງສັດນໍ້າ, ສັດປ່າ ແລະ ພືດປ່າ. ສວນປູກພືດປ່າ ບັນຊີ I ນັ້ນ ຕ້ອງໄດ້ຂຶ້ນທະບຽນສວນປູກພືດປ່າ ນໍາ ໜ່ວຍງານຄຸ້ມຄອງໄຊເຕັດ ໂດຍປະສານສົມທົບກັບ ໜ່ວຍງານວິທະຍາສາດໄຊເຕັດ ແລະ ຕ້ອງໄດ້ ແຈ້ງຂຶ້ນທະບຽນສວນປູກພືດປ່າໃຫ້ກອງເລຂາໄຊເຕັດ. ການຄ້າຂາຍ ບັນຊີ I ຂອງພືດປ່າ ທີ່ໄດ້ມາຈາກ ການຂະຫຍາຍພັນທຽມພືດປ່ານັ້ນ ຕ້ອງມີການຫຸ້ມຫໍ່, ໃສ່ກາໝາຍສະເພາະ ແລະ ຕ້ອງມີໃບອະນຸຍາດ ຈາກໜ່ວຍງານຄຸ້ມຄອງໄຊເຕັດ ພ້ອມທັງ ກໍານົດໂກຕ້າການຄ້າຂາຍປະຈໍາປີ ຕາມການອະນຸມັດຈາກ ກະຊວງກະສິກໍາ ແລະ ປ່າໄມ້;
3. ບັນຊີ II ຂອງສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ອະນຸຍາດໃຫ້ດໍາເນີນກິດຈະການ ເພື່ອຈຸດປະສົງທາງການຄ້າ ແລະ ທີ່ບໍ່ແມ່ນທາງການຄ້າ ແຕ່ຕ້ອງດໍາເນີນການສຶກສາຄວາມຢູ່ລອດ, ການກວດກາຄວາມຖືກຕ້ອງທາງດ້ານກົດໝາຍ ແລະ ມີໃບ ອະນຸຍາດ ຈາກໜ່ວຍງານຄຸ້ມຄອງໄຊເຕັດ;

4. ບັນຊີ III ຂອງສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ອະນຸຍາດໃຫ້ຄ້າຂາຍໄດ້ ແຕ່ຕ້ອງມີ ການກວດກາຄວາມຖືກຕ້ອງທາງດ້ານກົດໝາຍ ແລະ ໃບອະນຸຍາດຈາກໜ່ວຍງານຄຸ້ມຄອງໄຊເຕັດ.

ການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ຕາມບັນຊີຂອງໄຊເຕັດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ລະຫວ່າງ ສປປ ລາວ ແລະ ປະເທດທີ່ບໍ່ແມ່ນພາຄີຂອງໄຊເຕັດ ສາມາດຮັບຮູ້ໃບອະນຸຍາດ ຈາກອົງການທີ່ມີສິດອຳນາດຂອງປະເທດຄູ່ຄ້າ.

**ມາດຕາ 11 ການນຳເຂົ້າ**

ການນຳເຂົ້າ ແມ່ນ ການນຳເອົາ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ເຂົ້າມາ ສປປ ລາວ.

ຜູ້ທີ່ມີຈຸດປະສົງນຳເຂົ້າ ບັນຊີ I, ບັນຊີ II ແລະ ບັນຊີ III ຕ້ອງປະກອບເອກະສານ ຂໍອະນຸຍາດນຳເຂົ້າ ດັ່ງນີ້:

1. ໃບອະນຸຍາດສົ່ງອອກ ຫຼື ໃບອະນຸຍາດສົ່ງອອກຄືນ ຈາກອົງການທີ່ກ່ຽວຂ້ອງ ຂອງປະເທດຕົ້ນທາງ;
2. ໃບຢັ້ງຢືນຖິ່ນກຳເນີດ;
3. ໃບຢັ້ງຢືນສຸຂະພາບສັດ, ໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນ;
4. ສັນຍາລະຫວ່າງ ຜູ້ນຳເຂົ້າ ກັບ ຜູ້ສົ່ງອອກ;
5. ລາຍການບັນຊີປະເພດ, ຈຳນວນທີ່ຈະນຳເຂົ້າ;
6. ມີການຂົນສົ່ງທີ່ປອດໄພ ແລະ ສະຖານທີ່ຮອງຮັບຢ່າງເໝາະສົມ.

ສຳລັບການນຳເຂົ້າ ບັນຊີ I, II ແລະ III ຂອງສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ, ຕ້ອງຮັບປະກັນວ່າ ຈະບໍ່ສົ່ງຜົນກະທົບທາງລົບຕໍ່ຄວາມຢູ່ລອດ ຂອງ ສັດນໍ້າ, ສັດປ່າ ແລະ ພືດປ່າ ຢູ່ພາຍໃນປະເທດ.

**ມາດຕາ 12 ການສົ່ງອອກ**

ການສົ່ງອອກ ແມ່ນ ການນຳເອົາ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ອອກຈາກ ສປປ ລາວ ໄປຕ່າງປະເທດ.

ຜູ້ທີ່ມີຈຸດປະສົງ ສົ່ງອອກ ບັນຊີ I, ບັນຊີ II ແລະ ບັນຊີ III ຕ້ອງປະກອບເອກະສານ ຂໍອະນຸຍາດ ສົ່ງອອກ ດັ່ງນີ້:

1. ໃບຢັ້ງຢືນຖິ່ນກຳເນີດ;
2. ໃບຢັ້ງຢືນການສຶກສາຄວາມຢູ່ລອດ ຍົກເວັ້ນ ບັນຊີ III;
3. ໃບຢັ້ງຢືນສຸຂະພາບສັດ, ໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນ;
4. ສັນຍາລະຫວ່າງ ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ;
5. ລາຍການບັນຊີປະເພດ, ຈຳນວນທີ່ຈະສົ່ງອອກ;
6. ມີການຂົນສົ່ງທີ່ປອດໄພ ແລະ ສະຖານທີ່ຮອງຮັບຢ່າງເໝາະສົມ.

ສຳລັບ ບັນຊີ I ຂອງພືດປ່າ ທີ່ໄດ້ມາຈາກການຂະຫຍາຍພັນທຽມພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ຍັງຕ້ອງມີໃບຢັ້ງຢືນກ່ຽວກັບການຂະຫຍາຍພັນທຽມ.

ສຳລັບ ບັນຊີ I ຂອງສັດນໍ້າ ແລະ ສັດປ່າ ທີ່ໄດ້ມາຈາກການຂະຫຍາຍພັນ ເພື່ອຈຸດປະສົງທີ່ບໍ່ແມ່ນການຄ້າ ຕ້ອງມີໃບຢັ້ງຢືນກ່ຽວກັບການຂະຫຍາຍພັນ.

**ມາດຕາ 13 ການສົ່ງອອກຄືນ**

ການສົ່ງອອກຄືນ ແມ່ນ ການນຳເອົາ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ທີ່ຖືກນຳເຂົ້າມາໃນເມື່ອກ່ອນ ອອກຈາກ ສປປ ລາວ ຄືນປະເທດຕົ້ນທາງ ຫຼື ປະເທດທີສາມ ຕາມລະບຽບການ.

ການສົ່ງອອກຄືນ ນອກຈາກການປະກອບເອກະສານທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງດຳລັດສະບັບນີ້ແລ້ວ ຍັງຕ້ອງປະກອບເອກະສານເພີ່ມເຕີມ ດັ່ງນີ້:

1. ໃບທະບຽນຂຶ້ນບັນຊີ;
2. ໃບຢັ້ງຢືນການຂະຫຍາຍພັນທຽມພືດປ່າ ຫຼື ການຂະຫຍາຍພັນ ສັດນ້ຳ ແລະ ສັດປ່າ ທີ່ຈະສົ່ງອອກ;
3. ໃບອະນຸຍາດນຳເຂົ້າ ຂອງອົງການທີ່ກ່ຽວຂ້ອງ ຂອງປະເທດປາຍທາງ ຫຼື ເອກະສານອື່ນ ຕາມແຕ່ລະກໍລະນີ.

**ມາດຕາ 14 ການສົ່ງຜ່ານ**

ການສົ່ງຜ່ານ ແມ່ນ ການນຳເອົາ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ຜ່ານ ສປປ ລາວ ໄປປະເທດອື່ນ.

ຜູ້ສົ່ງຜ່ານ ຕ້ອງຂໍອະນຸຍາດນຳຜ່ານ ຕໍ່ໜ່ວຍງານຄຸ້ມຄອງໄຊເຕັດ ຂອງ ສປປ ລາວ ຊຶ່ງຕ້ອງມີ:

1. ໃບອະນຸຍາດສົ່ງອອກ ຂອງອົງການກ່ຽວຂ້ອງ ຂອງປະເທດຕົ້ນທາງ;
2. ໃບອະນຸຍາດນຳເຂົ້າ ຂອງປະເທດປາຍທາງ (ຖ້າມີ);
3. ໃບຢັ້ງຢືນຖິ່ນກຳເນີດ (ຖ້າມີ);
4. ໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນ;
5. ລາຍການບັນຊີປະເພດ ແລະ ຈຳນວນທີ່ຈະນຳຜ່ານ;
6. ມີການຂົນສົ່ງທີ່ປອດໄພ.

**ມາດຕາ 15 ການຂໍໃບອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂໍໃບອະນຸຍາດ ນຳເຂົ້າ, ສົ່ງອອກ ແລະ ສົ່ງອອກຄືນ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານຄົບຊຸດ ຕາມທີ່ກຳນົດໄວ້ໃນ ມາດຕາ 11, 12 ແລະ 13 ຂອງດຳລັດສະບັບນີ້ ຕໍ່ໜ່ວຍງານຄຸ້ມຄອງໄຊເຕັດ ຂອງ ສປປ ລາວ.

ຄຳຮ້ອງຂໍໃບອະນຸຍາດແຕ່ລະປະເພດ ມີແບບພິມສະເພາະ ຊຶ່ງໜ່ວຍງານຄຸ້ມຄອງໄຊເຕັດ ເປັນຜູ້ກຳນົດ.

ການນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ການສົ່ງຜ່ານ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ຕ້ອງໄດ້ເສຍຄ່າທຳນຽມ ແລະ ຄ່າບໍລິການຕາມທີ່ໄດ້ກຳນົດໄວ້ໃນ ລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 16 ການພິຈາລະນາອອກໃບອະນຸຍາດ**

ພາຍຫຼັງ ໜ່ວຍງານຄຸ້ມຄອງໄຊເຕັດ ໄດ້ຮັບຄຳຮ້ອງແລ້ວ ຕ້ອງຄົ້ນຄວ້າພິຈາລະນາ ອອກໃບອະນຸຍາດ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຄົບຖ້ວນເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດໄດ້ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງເຫດຜົນໃຫ້ຜູ້ຮ້ອງຂໍຊາບ.

ໃບອະນຸຍາດ ສົ່ງອອກ ແລະ ສົ່ງອອກຄືນ ມີອາຍຸການນຳໃຊ້ ຫົກ ເດືອນ ນັບແຕ່ວັນອອກໃບອະນຸຍາດເປັນຕົ້ນໄປ. ສຳລັບ ໃບອະນຸຍາດນຳເຂົ້າ ມີອາຍຸການນຳໃຊ້ ສິບສອງ ເດືອນ ນັບແຕ່ວັນອອກໃບອະນຸຍາດເປັນຕົ້ນໄປ. ໃບອະນຸຍາດແຕ່ລະໃບ ແມ່ນສາມາດນຳໃຊ້ໄດ້ພຽງຄັ້ງດຽວ.

ໃນກໍລະນີ ໜ່ວຍງານຄຸ້ມຄອງໄຊເຕັດກວດພົບວ່າ ມີການບິດເບືອນ, ປອມແປງ ເອກະສານ ແລະ ນໍາໃຊ້ເອກະສານປອມ ຫຼື ບໍ່ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໜ່ວຍງານຄຸ້ມຄອງໄຊເຕັດ ສາມາດລຶບລ້າງໃບອະນຸຍາດ ທີ່ອອກໃຫ້.

## ໝວດທີ 5
## ສິດ ແລະ ໜ້າທີ່ ຂອງໜ່ວຍງານຄຸ້ມຄອງໄຊເຕັດ ແລະ ໜ່ວຍງານວິທະຍາສາດໄຊເຕັດ

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງໜ່ວຍງານຄຸ້ມຄອງໄຊເຕັດ**

ໜ່ວຍງານຄຸ້ມຄອງໄຊເຕັດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
3. ຄຸ້ມຄອງ, ເກັບຮັກສາ, ທໍາລາຍ ຫຼື ສົ່ງຄືນ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ຕາມຄໍາຕັດສິນຂອງສານ;
4. ຂຶ້ນທະບຽນ ແລະ ແຈ້ງບັນຊີ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ແລະ ຂຶ້ນທະບຽນສວນປູກພືດປ່າ ບັນຊີ I ທີ່ຂະຫຍາຍພັນທຽມ;
5. ດໍາເນີນການກວດກາຄວາມຖືກຕ້ອງທາງດ້ານກົດໝາຍ ຂອງ ສັດນໍ້າ, ສັດປ່າ ແລະ ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ;
6. ເຂົ້າຮ່ວມການສຶກສາຄວາມຢູ່ລອດ ຮ່ວມກັບໜ່ວຍງານວິທະຍາສາດໄຊເຕັດ;
7. ກໍານົດໂກຕ້າສົ່ງອອກ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຕາມຄໍາເຫັນ ຂອງ ໜ່ວຍງານວິທະຍາສາດໄຊເຕັດ ເພື່ອສະເໜີ ກະຊວງກະສິກໍາ ແລະ ປ່າໄມ້ ພິຈາລະນາ;
8. ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຂຶ້ນທະບຽນສວນປູກພືດປ່າ, ຟາມ, ສູນຟື້ນຟູ ແລະ ຊ່ວຍເຫຼືອ ສັດນໍ້າ, ສັດປ່າ;
9. ອອກ ຫຼື ລຶບລ້າງ ໃບອະນຸຍາດ ການນໍາເຂົ້າ, ສົ່ງອອກ ແລະ ສົ່ງອອກຄືນ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ;
10. ສະເໜີ ອົງການທີ່ມີສິດອໍານາດ ຂອງປະເທດຕົ້ນທາງ ເພື່ອອອກໃບອະນຸຍາດ ກ່ຽວກັບການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
11. ສ້າງ ແລະ ພັດທະນາ ລະບົບຂໍ້ມູນ ຂ່າວສານ, ກົນໄກການຮ່ວມມື, ແລກປ່ຽນຂໍ້ມູນ ຂ່າວສານ ຈາກ ຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ທັງພາຍໃນ ແລະ ຕ່າງປະເທດ;
12. ເຂົ້າຮ່ວມກອງປະຊຸມ, ສໍາມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານຄຸ້ມຄອງ ການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
13. ລາຍງານ ຂໍ້ມູນການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ປະຈໍາປີ ລວມທັງ ການຄ້າຂາຍທີ່ຖືກຕ້ອງ ແລະ ບໍ່ຖືກຕ້ອງຕາມກົດໝາຍ ສົ່ງໃຫ້ກອງເລຂາໄຊເຕັດ ກ່ອນວັນທີ 31 ຕຸລາ ໃນແຕ່ລະປີ;

14. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນ ຂໍ້ມູນ ຂ່າວສານ ແລະ ຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ;
15. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;
16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງໜ່ວຍງານວິທະສາດໄຊເຕັດ**

ໜ່ວຍງານວິທະຍາສາດໄຊເຕັດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ລະບຽບການກ່ຽວກັບວຽກງານວິທະຍາສາດໄຊເຕັດ;
2. ໂຄສະນາ ເຜີຍແຜ່ ລະບຽບການກ່ຽວກັບວຽກງານວິທະຍາສາດໄຊເຕັດ;
3. ອອກໃບຢັ້ງຢືນການສຶກສາຄວາມຢູ່ລອດ;
4. ຄົ້ນຄວ້າເພື່ອສ້າງແຜນຄຸ້ມຄອງຄວາມຢູ່ລອດຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ເພື່ອຮັບປະກັນຄວາມຍືນຍົງ ຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
5. ຄົ້ນຄວ້າ ມີຄຳເຫັນ ກ່ຽວກັບການກຳນົດໂກຕ້າສົ່ງອອກ ປະຈຳປີ ສະເໜີ ໜ່ວຍງານຄຸ້ມຄອງໄຊເຕັດ ພິຈາລະນາ;
6. ມີຄຳເຫັນຕໍ່ໜ່ວຍງານຄຸ້ມຄອງໄຊເຕັດ ແລະ ເຂົ້າຮ່ວມການທຳລາຍສັດນ້ຳ ແລະ ສັດປ່າ ທີ່ມີຊີວິດ ຫຼື ບໍ່ມີຊີວິດ ທີ່ຖືກຍຶດ ຫຼື ມີໄພຂົ່ມຂູ່ຕໍ່ລະບົບນິເວດ;
7. ມີຄຳເຫັນຕໍ່ໜ່ວຍງານຄຸ້ມຄອງໄຊເຕັດ ກ່ຽວກັບການນຳເຂົ້າ ສັດນ້ຳ, ສັດປ່າ ແລະ ພືດປ່າ ຊະນິດພັນຕ່າງຖິ່ນ ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ລະບົບນິເວດ ແລະ ຊະນິດພັນທ້ອງຖິ່ນ;
8. ດຳເນີນການສຶກສາຄົ້ນຄວ້າ, ທົດລອງ, ວິເຄາະ, ວິໄຈ ແລະ ພິສູດແຫຼ່ງກຳມະພັນ (DNA) ພ້ອມທັງ ອອກໃບຢັ້ງຢືນແຫຼ່ງກຳມະພັນ ສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ;
9. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານຄຸ້ມຄອງ ການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
10. ເກັບກຳ ແລະ ວິເຄາະຂໍ້ມູນ ຂ່າວສານ ກ່ຽວກັບສະພາບດ້ານຊີວະວິທະຍາ ຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໄດ້ຮັບຜົນກະທົບຈາກ ການຊື້, ຂາຍ ເພື່ອກະກຽມບົດສະເໜີ ດັດແກ້ບັນຊີຂອງໄຊເຕັດ ຕາມຄວາມເໝາະສົມ;
11. ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນບັນຊີ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ເພື່ອນຳສະເໜີ ຕໍ່ກອງປະຊຸມບັນດາປະເທດພາຄີ;
12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ໜ່ວຍງານຄຸ້ມຄອງໄຊເຕັດ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 19 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ໃຫ້ສິນບົນແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່, ປອມແປງເອກະສານ ແລະ ນຳໃຊ້ເອກະສານປອມ;

2. ນາບຂູ່, ກົດໜ່ວງຖ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
3. ນຳເອົາ ສັດນ້ຳ ແລະ ສັດປ່າ ທີ່ຢູ່ໃນບັນຊີ I ລວມທັງ ຊາກ, ຊິ້ນສ່ວນ ອອກຈາກຖິ່ນທີ່ຢູ່ອາໄສ ມາໄວ້ໃນຄອບຄອງ;
4. ທໍລະມານສັດ ທຸກຮູບແບບ;
5. ລ້ຽງ ແລະ ການຂະຫຍາຍພັນສັດນ້ຳ ແລະ ສັດປ່າ ບັນຊີ I ເພື່ອຈຸດປະສົງທາງການຄ້າ;
6. ລັກລອບຫາ, ລ່າ, ຊື້, ຂາຍ, ຂົນສົ່ງ, ຜະລິດ, ແຈກຢາຍ, ມີໄວ້ໃນຄອບຄອງ, ນຳໃຊ້ ຫຼື ປ່ອຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ລວມທັງຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
7. ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ ຫຼື ຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ດຳລັດສະບັບນີ້;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ດຳລັດສະບັບນີ້.

**ມາດຕາ 20 ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບສິນບົນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່;
4. ກົດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ ຫຼື ນຳໃຊ້ເອກະສານປອມ, ອອກເອກະສານບໍ່ຖືກຕ້ອງ;
5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ເປີດເຜີຍຄວາມລັບຂອງ ລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ບິດເບືອນຄວາມຈິງ, ປິດບັງ, ເຊື່ອງອຳ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືກັບຜູ້ກະທຳຜິດ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ດຳລັດສະບັບນີ້.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 21 ອົງການຄຸ້ມຄອງ ແລະ ກວດກາ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງ ແລະ ກວດກາວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບ ກະຊວງສຶກສາທິການ ແລະ ກິລາ, ກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ເປັນ ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
4. ອອກ ແລະ ລົບລ້າງ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
5. ຊີ້ນໍາ ການຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
6. ແຕ່ງຕັ້ງ, ປົດຕໍາແໜ່ງ ຫຼື ຍົກຍ້າຍ ບຸກຄະລາກອນ ຂອງໜ່ວຍງານຄຸ້ມຄອງໄຊເຕັດ;
7. ຊີ້ນໍາການກວດກາ ແລະ ການດໍາເນີນຄະດີ ກ່ຽວກັບ ສັດນໍ້າ, ສັດປ່າ, ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
8. ເຂົ້າຮ່ວມ ແລະ ລາຍງານຜົນກອງປະຊຸມ ການຄຸ້ມຄອງການຄ້າຂາຍ ຊະນິດພັນ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ທັງພາຍໃນ ແລະ ຕ່າງປະເທດ;
9. ຂຶ້ນແຜນສ້າງ, ບໍາລຸງ, ຍົກລະດັບ ບຸກຄະລາກອນ ຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
10. ປະສານສົມທົບ ກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
11. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບ ວຽກງານວິທະຍາສາດໄຊເຕັດ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
2. ໂຄສະນາ ເຜີຍແຜ່, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ກ່ຽວກັບວຽກງານວິທະຍາສາດໄຊເຕັດ;
3. ອອກ ຫຼື ລົບລ້າງ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ກ່ຽວກັບວຽກງານວິທະຍາສາດໄຊເຕັດ;
4. ຊີ້ນໍາ ການຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານວິທະຍາສາດໄຊເຕັດ;
5. ແຕ່ງຕັ້ງ, ປົດຕໍາແໜ່ງ ຫຼື ຍົກຍ້າຍ ບຸກຄະລາກອນ ຂອງໜ່ວຍງານວິທະຍາສາດໄຊເຕັດ;
6. ເຂົ້າຮ່ວມກອງປະຊຸມ ກ່ຽວກັບວຽກງານວິທະຍາສາດໄຊເຕັດ ທັງພາຍໃນ ແລະ ຕ່າງປະເທດ;
7. ສ້າງ, ບໍາລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານວິທະຍາສາດໄຊເຕັດ;
8. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານວິທະຍາສາດໄຊເຕັດ;
9. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານວິທະຍາສາດໄຊເຕັດ;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານວິທະຍາສາດໄຊເຕັດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບ ອົງການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 25 ເນື້ອໃນການກວດກາ**

ການກວດກາວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
2. ການປະຕິບັດໜ້າທີ່ຂອງ ອົງການຈັດຕັ້ງ, ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການສ້າງ ແລະ ປະຕິບັດແຜນການກ່ຽວກັບ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
4. ເນື້ອໃນອື່ນທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 26 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຢ່າງມີຄຸນນະພາບ ແລະ ດຳເນີນຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຕາມທີ່ກຳນົດຢູ່ໃນໝວດທີ 6 ຂອງດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 29 ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ**

ໜ່ວຍງານຄຸ້ມຄອງໄຊເຕັດ ມີເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຊຶ່ງ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

**ມາດຕາ 30 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 31 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 31 ກໍລະກົດ 2024 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍການຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ສະບັບເລກທີ 348/ລບ, ລົງວັນທີ 11 ພະຈິກ 2022

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**